ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ
ກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ

ເລກທີ...0051-/ກຂອຄ
ນະຄອນຫຼວງວຽງຈັນ, ວັນທີ...25 SEP 2017...

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນດໍາເນີນງານ ວຽກອໍານວຍຄວາມສະດວກທາງດ້ານການຄ້າ ສໍາລັບປີ 2017-2022

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກອງເລຂາອໍານວຍຄວາມສະດວກທາງດ້ານ ການຄ້າ ສະບັບເລກທີ 023/ຄປຊ, ລົງວັນທີ 20 ຕຸລາ 2010.
- ອີງຕາມຜົນກອງປະຊຸມກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ຄັ້ງທີ 06 ໃນວັນທີ 11 ສິງຫາ 2017.

**ຫົວໜ້າ ກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ອອກ ຂໍ້ຕົກລົງ:**

ມາດຕາ 1: ຮັບຮອງ ແລະ ປະກາດໃຊ້ ແຜນດໍາເນີນງານວຽກອໍານວຍຄວາມສະດວກທາງດ້ານການຄ້າ ສໍາລັບປີ 2017-2022.

ມາດຕາ 2: ມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ ໃນນາມເປັນຫ້ອງການປະຈໍາກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ສົມທົບກັບບັນດາຂະແໜງການທີ່ປົກອ້ອມວຽກງານອໍານວຍຄວາມສະດວກທາງດ້ານການຄ້າ ຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນດໍາເນີນງານດັ່ງກ່າວ ໃຫ້ມີປະສິດທິຜົນສູງ ໂດຍກໍານົດເວລາປະຕິບັດແຕ່ລະມາດຕະການຍຸດທະສາດຢ່າງລະອຽດ ແລະ ລາຍງານຜົນການຈັດຕັ້ງປະຕິບັດໃຫ້ ຫົວໜ້າກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ຊາບ ເປັນປົກະຕິ.

ມາດຕາ 3: ບັນດາກົມກອງກ່ຽວຂ້ອງ ທີ່ຖືກແຕ່ງຕັ້ງເປັນສະມາຊິກກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ແຜນດໍາເນີນງານດັ່ງກ່າວ ແລະ ຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ
ຫົວໜ້າ ກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ

ກະຊວງອຸດສາຫະກໍາ ແລະ ການຄ້າ
ລັດຖະມົນຕີ

ປ ເຂັມມະນີ ພົນເສນາ

<u>ບ່ອນສົ່ງ:</u>

- ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເພື່ອຊາບ.
- ສະມາຊິກ ກຂອຄ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.